ຮາງວັນບົດດີເດັ່ນອັນດັບ 3 ໃນບັ້ນປະກວດເລື່ອງຈິງຄົນແທ້
ເນື່ອງໃນໂອກາດສະຫຼອງວັນສ້າງຕັ້ງກອງທັບປະຊາຊົນລາວຄົບຮອບ 55 ປີ

# ຂ້ອຍຍັງບໍ່ລືມ



## ເລື່ອງຈິງຄົນແທ້

ໂດຍ

ຄຳຄ່ອງ ເລື່ອນວິໄລວົງ

ຈັດພິມໂດຍ ສຳນັກພິມ ດອກເກດ

# ຂ້ອຍຍັງບໍ່ລືມ



ເລື່ອງຈິງຄົນແທ້

ໂດຍ: ຄຳຄ່ອງ ເລື່ອນວິໄລວົງ

ຮາງວັນບົດດີເດັ່ນອັນດັບ 3 ໃນບັ້ນປະກວດເລື່ອງຈິງຄົນແທ້
ເນື່ອງໃນໂອກາດສະຫຼອງ ວັນສ້າງຕັ້ງກອງທັບປະຊາຊົນລາວ
ຄົບຮອບ 55 ປີ

ດອກເກດ
DokkeD
ຈັດພິມໂດຍ ສຳນັກພິມ ດອກເກດ

ຊື່ປຶ້ມ ຂ້ອຍຍັງບໍ່ລືມ, ເລື່ອງຈິງຄົນແທ້

ຮາງວັນບົດດີເດັ່ນອັນດັບ 3 ໃນບັ້ນປະກວດເລື່ອງຈິງຄົນແທ້
ເນື່ອງໃນໂອກາດສະຫຼອງ ວັນສ້າງຕັ້ງກອງທັບປະຊາຊົນລາວ
ຄົບຮອບ 55 ປີ

ຂຽນໂດຍ ຄໍາຄ່ອງ ເລື່ອນວິໄລວົງ
ບັນນາທິການໂດຍ ຮອງສາສະດາຈານ ລໍາໄພ ພິພັກຂະວົງ
ນາງ ດວງເດືອນ ບຸນຍາວົງ
ອອກແບບ ແລະຈັດພິມໂດຍ ສໍານັກພິມ ດອກເກດ
ພິມເທື່ອ ທີ 1
ໂທ 021 264 633

ທະບຽນພິມເລກທີ: 151ພຈ07052012
ຈໍານວນພິມ: 1,000 ຫົວ
ພິມທີ່ ນະຄອນຫຼວງວຽງຈັນ, 2012
ພິມທີ່ ພະໄຊ ກຣາບຟິກ

© ສະຫງວນລິຂະສິດ ໂດຍ ຄໍາຄ່ອງ ເລື່ອນວິໄລວົງ

ຂໍ້ມູນທາງບັນນານຸກົມຂອງຫໍສະໝຸດແຫ່ງຊາດ

ຄໍາຄ່ອງ ເລື່ອນວິໄລວົງ

ຂ້ອຍຍັງບໍ່ລືມ / ຄໍາຄ່ອງ ເລື່ອນວິໄລວົງ. -- ວຽງຈັນ : ສໍານັກພິມ ດອກເກດ, 2012

120 ໜ້າ : ພາບປະກອບ ; 21 ຊມ

1. ຄໍາຄ່ອງ ເລື່ອນວິໄລວົງ. 2 ຊີວິດ ແລະ ຜົນງານ. 3. ເລື່ອງຈິງຄົນແທ້ I. ຊື່ເລື່ອງ

923.7--dc21

ISBN 978-9932-07-024-4

# ສາລະບັນ

ໜ້າ


ຄຳນຳຂອງຜູ້ຂຽນ 1

ຄຳຊົມເຊີຍຂອງ ຮອງສາສະດາຈານ ລຳໄມ ພິພັກຂະວົງ 5

ຕອນ 1: ນັກຮຽນຄູຫຼວງພະບາງ

ຕອນ 2: ໄປປະຈຳການ ແລະເຂົ້າເຮັດການປະຕິວັດ

ຕອນ 3: ສັດຕູຈັບແລ້ວຊິຂ້າ

ຕອນ 4: ໂຕນຈາກສັດຕູ
ວັນທີ 26 ເດືອນ 3 ປີ 1961

ຕອນ 5: ຖືກຍິນຍິງ

ຕອນ 6: ຖືກສັດຕູຈັບໄດ້

ຕອນ 7: ພາຍຫຼັງປະເທດໄດ້ຮັບການປົດປ່ອຍ 1975.

ຕອນ 8: ບົດສົ່ງທ້າຍ

## ຄຳນຳຂອງຜູ້ຂຽນ

ຂ້າພະເຈົ້າມີຄວາມພາກພູມໃຈ ທີ່ສຸດທີ່ໄດ້ສຳເລັດການຮີບໂຮມບົດຂຽນກ່ຽວກັບການເຄື່ອນໄຫວຂອງຕົນເອງ ເພື່ອມາເຜີຍແຜ່ສູ່ສາຍຕາຂອງທ່ານຜູ້ອ່ານ. ອາດມີບາງຄົນສົນໃຈວ່າເປັນຫຍັງຂ້າພະເຈົ້າຈຶ່ງປະພັນເລື່ອງຂອງຕົນເອງຂຶ້ນມາ? ເປັນຫຍັງບໍ່ໃຫ້ຄົນອື່ນສັງລວມໃຫ້?. ເຫດຜົນຂອງຂ້າພະເຈົ້າກໍຄືເລື່ອງນີ້ມັນບໍ່ຄືກັບເຮົາປະພັນເລື່ອງໃດເລື່ອງໜຶ່ງທີ່ປັ້ນແຕ່ງຂຶ້ນມາເອງ ຢາກໃຫ້ເລື່ອງມັນເປັນແນວໃດ ຢາກໃຫ້ມີເນື້ອຫາສາລະໂດດເດັ່ນແນວໃດ ແລ້ວກໍຂຽນໃສ່ຕາມໃຈມັກ.
ອັນນີ້ມັນເປັນເລື່ອງຈິງຄົນແທ້ ທີ່ຂ້າພະເຈົ້າໄດ້ປະສົບພົບພໍ້ຫຼາຍບັ້ນຫຼາຍຕອນໃນຊີວິດທີ່ຜ່ານມາແລ້ວ ຄິດວ່າບໍ່ມີໃຜດອກທີ່ຈະຮູ້ການເຄື່ອນໄຫວຂອງເຮົາເທົ່າກັບເຮົາເອງ ຈຶ່ງບໍ່ສາມາດໃຫ້ຜູ້ໃດຂຽນໃຫ້ໄດ້ ໃນຊີວິດທີ່ຜ່ານມາ ມີບາງຄັ້ງກໍເບີກບານມ່ວນຊື່ນມີບາງຄັ້ງກໍເສົ້າໂສກເສຍໃຈຈົນນ້ຳຕາໄຫຼຫຼັ່ງ ບາງຄັ້ງກໍເອົາຊີວິດເຂົ້າສ່ຽງ, ແຕ່ປານນັ້ນ ຄວາມຮັກຊາດມັນສູງກວ່າ ສັດຕູທຳລາຍເຮົາຍິ່ງມັນທຳລາຍເຮົາເທົ່າໃດ ເຮົາກໍຍິ່ງຄຽດແຄ້ນໃຫ້ມັນເທົ່ານັ້ນ.
ການສ້າງບົດນີ້ຂຶ້ນ ກໍເພື່ອໄວ້ໃຫ້ລູກຫຼານຄົນທີ່ເກີດໃໝ່ ໃຫຍ່ລຸນໄດ້ຮູ້ເຖິງຊີວິດການເຄື່ອນໄຫວເຮັດການປະຕິວັດຕໍ່ສູ້ກູ້ຊາດມາເຖິງປັດຈຸບັນຂອງຜູ້ເປັນພໍ່ເປັນພໍ່ຕູ້ເປັນປູ່ໃນອະດີດນັ້ນເປັນ

ແນວໃດ? ທຽບໃສ່ຊີວິດຂອງຕົນເອງທີ່ເຮັດວຽກນຳພັກ ນຳລັດ ໃນປັດຈຸບັນແຕກຕ່າງກັນຄືແນວໃດ? ເມື່ອຫລຽວຄືນເບິ່ງການດຳລົງຊີວິດຂອງປະຊາຊົນ ໂດຍສະເພາະປະຊາຊົນ ຢູ່ເຂດປົດປ່ອຍເກົ່າໃນຄາວນັ້ນບ້ານເຮືອນຖືກທຳລາຍ ຫລືຕ້ອງພັດພາກຈາກບ້ານຈາກເຮືອນ ມີບ້ານມີເຮືອນກໍບໍ່ໄດ້ຢູ່ ອາໄສຢູ່ນຳແຕ່ປ່າຕົບຫ້ວຍຮ່ອງຕາມຖ້ຳເງີບຫີນຫວ່າງຜາ; ຢ້ານເຮືອນຖືກໄຟໄໝ້ເຜົາຜານເປັນບ້ານຮ້າງ ທຽບໃສ່ກັບ ຍຸກທີ່ພວກເຮົາສຳເລັດການຂັບໄລ່ສັດຕູອອກຈາກຜືນແຜ່ນດິນລາວ ປົດປ່ອຍປະເທດຊາດແລ້ວ ເລີ່ມສ້າງສາພັດທະນາ ປະເທດຊາດໃຫ້ຈະເລີນຮຸ່ງເຮືອງເປັນກ້າວໆນີ້ ມັນແຕກຕ່າງກັນຄືແນວໃດ? ແລ້ວພວກເພິ່ນທີ່ໄດ້ຜ່ານພົ້ນເຫດການດັ່ງກ່າວມານັ້ນ ແມ່ນເພິ່ນໄດ້ຫຍັງລື່ນເຮົາແດ່? ຫຼາຍໆສະຫາຍກໍຍັງບໍ່ມີຄວາມສາມາດປຸກເຮືອນຢູ່ເອງໄດ້ ແມ່ນລັດເປັນຜູ້ຈັດສັນທີ່ດິນ ແລະປຸກເຮືອນໃຫ້ຢູ່. ຫຼາຍໆສະຫາຍກໍເສຍອົງຄະແລະມີຫຼາຍສະຫາຍກໍເສຍຊີວິດໄປແລ້ວ ຍັງເຫຼືອໄວ້ແຕ່ຜົນງານແລະຄຸນງາມຄວາມດີທີ່ສ້າງເອົາໄວ້ເທົ່ານັ້ນ. ສະນັ້ນທັງໝົດທີ່ຂຽນໄວ້ແມ່ນຄວາມຈິງ, ແຕ່ກໍມີບາງບ່ອນເປັນຄວາມຈິງທີ່ແຕະຕ້ອງຈິດໃຈຂອງຄົນອື່ນຫຼາຍກໍໄດ້ຕັດອອກ ເປັນຕົ້ນແມ່ນໄລຍະທີ່ສັດຕູຈັບມາໄດ້ເປັນຄູສອນຢູ່ເມືອງໂພນໂຮງ ໄລຍະນີ້ແມ່ນຫົວລ້ຽວຫົວຕໍ່ທີ່ສຸດ ມີຜູ້ຕິດຕາມສິ່ງຊອມເບິ່ງຂ້າພະເຈົ້າຢ່າງຫຼວງຫຼາຍ ເປັນຕົ້ນແມ່ນພວກຫ້ອງການທີ 2 ຂອງພວກ

ສັດຕູ, ເວລານັ້ນ ຖ້າບໍ່ຊ່າງຢູ່ກໍອາດຈະຖືກຈັບເປັນຮອບສຸດທ້າຍ ກໍເປັນໄດ້.

ເລື່ອງ "ຂ້ອຍຍັງບໍ່ລືມ"ນີ້ ມີບາງຄົນອາດຈະບໍ່ເຊື່ອ ແຕ່ອັນເປັນຫຼັກຖານກໍຄືການເອີ່ຍເຖິງບັນດາເພື່ອນສະຫາຍທີ່ ໄດ້ຮ່ວມຊຸມຄອງສູ້ຮົບດ້ວຍກັນມາກໍອາດສືບຖາມນຳເພື່ອນສະ ຫາຍດັ່ງກ່າວໄດ້. ແນ່ນອນແລ້ວ ເລື່ອງດັ່ງກ່າວ ມັນຜ່ານພົ້ນມາ ເປັນເວລາສາມ-ສີ່ສິບປີແລ້ວ ຈຶ່ງມາຂຽນຂຶ້ນໃນເດືອນເມສາ 1995 ຫຼັງອອກຮັບບຳນານໄດ້ຫ້າປີ. ສະນັ້ນ ມີບາງບ່ອນກໍບໍ່ຈື່ ວັນທີເດືອນປີ ຈຶ່ງບໍ່ສາມາດຂຽນໃສ່ກໍມີ ຖືວ່າຂຽນລົງໃນປຶ້ມນີ້ ຍັງບໍ່ໝົດ ຍັງມີຫຼາຍຕອນທີ່ບໍ່ໄດ້ຂຽນໃສ່. ເຖິງຢ່າງໃດ ຂ້າພະ ເຈົ້າເອງເຊິ່ງເປັນເຈົ້າຂອງເລື່ອງນີ້ ແມ່ນມີຂໍ້ມູນມີຊີວະປະຫວັດ ເປັນແຕ່ລະໄລຍະບວກກັບ ຄວາມຊົງຈຳເປັນບ່ອນອີງ. ດັ່ງນັ້ນ ຖ້າຜິດພາດບ່ອນໃດ ຈຶ່ງຂໍອະໄພນຳບັນດາເພື່ອນສະຫາຍທີ່ເຄີຍ ໄດ້ຮ່ວມວຽກງານກັນມາແຕ່ຄາວກ່ອນ ເຊິ່ງປັດຈຸບັນ ບາງຄົນກໍ ເປັນຜູ້ໃຫຍ່ໄມ້ສູງ ເປັນການນຳຂັ້ນສຳຄັນຂອງຊາດ ແລະຂໍອະ ໄພນຳ ບັນດາທ່ານຜູ້ອ່ານໃນວາລະນີ້ດ້ວຍ.

ບ້ານໂພນງາມ ວັນທີ 10 ເດືອນ1 ປີ2012

ຄຳຄອງ ເລື່ອນວິໄລວົງ



## ຄຳຊົມເຊີຍຂອງ
## ຮອງສາສະດາຈານ ລຳໄມ ພິພັກຂະວົງ

ບົດເລື່ອງ "ຂ້ອຍຍັງບໍ່ລືມ"ນີ້ ເປັນການຮວບຮວມເຫດການສຳຄັນໆ ໃນຊີວິດການເຄື່ອນໄຫວຂອງ ທ່ານຄູຄຳຄ່ອງ ເລື່ອນວິໄລວົງ. ໃນຊີວິດເຍົາໄວຂອງທ່ານນັ້ນ ຫລັງຈາກຮຽນຈົບຊັ້ນປະຖົມສຶກສາ ເຊິ່ງໃນສະໄໝນັ້ນມັກເອີ້ນວ່າ "ຈົບແຊກ"(ພາສາຝຣັ່ງເອີ້ນວ່າ"Certificat d'étude primaire") ແລ້ວ ທ່ານໄດ້ສະໝັກເຂົ້າເຝິກອົບຮົມວິຊາຄູລະດັບຄູປະຖົມຢູ່ຫລວງພະບາງ. ຫລັງຈາກສຳເລັດບັ້ນອົບຮົມແລ້ວ ທ່ານໄດ້ຖືກສົ່ງໄປປະຈຳການເປັນຄູສອນຢູ່ໂຮງຮຽນປະຖົມບ້ານສົບຄາວ ຕາແສງພັນລໍ ດ່ານເມືອງຮ້ຽມຂຶ້ນກັບເມືອງປາກແຊງ ແຂວງຫລວງພະບາງ ເຊິ່ງຄວາມຈິງແລ້ວ ໂຮງຮຽນດັ່ງກ່າວຕັ້ງຢູ່ບ້ານລັ້ງເປົ້າໄກຈາກບ້ານສົບຄາວໄປທາງທິດໃຕ້ປະມານສີ່ກິໂລແມັດ. ຂ້າພະເຈົ້າເອງ ໃນຖານະເປັນນັກຮຽນປະຖົມຊຸດທຳອິດຂອງນາຍຄູຄຳຄ່ອງ ກໍຍັງຈື່ໄດ້ວ່າ ເພິ່ນເປັນຄູໜຸ່ມນ້ອຍທີ່ມີຄວາມເອົາໃຈໃສ່ຕໍ່ໜ້າທີ່ການສິດການສອນ ແລະການສຶກສາອົບຮົມນັກຮຽນ, ເພິ່ນເລີ່ມຕົ້ນການສອນແບບຫ້ອງຄວບ ເພາະມີນັກຮຽນທີ່ໄປຮຽນຢູ່ບ້ານອື່ນ (ບ້ານໂພນງາມ)ໃນເວລາທີ່ບ້ານສົບຄາວຍັງບໍ່ທັນມີໂຮງຮຽນນັ້ນກັບມາຮຽນຢູ່ບ້ານຕົນເອງ. ເພິ່ນທັງສອນໜັງສື ຕາມຫລັກສູດ

ຢ່າງຄົບຖ້ວນ ທັງຈັດກິດຈະກຳນອກຫລັກສູດຕ່າງໆຢ່າງຄົບຖ້ວນ ຕາມຫລັກວິຊາຄູ. ນອກຈາກເປັນຄູທີ່ດີ ຂອງນັກຮຽນແລ້ວ ເພິ່ນຍັງມີຄວາມສະໜິດສະໜົມກັບຊາວບ້ານເໝືອນເປັນພີ່ເປັນນ້ອງກັນເປັນຢ່າງດີ ເຮັດໃຫ້ໄດ້ຮັບຄວາມນັບຖື ແລະຮັກແພງຈາກພໍ່ແມ່ປະຊາຊົນຂອງບ້ານແລະທ້ອງຖິ່ນນັ້ນເປັນຢ່າງສູງ. ແຕ່ເນື່ອງຈາກວ່າປະຊາຊົນເຂດບ້ານລັ້ງເປົ້າ ເຊິ່ງປະກອບອາຊີບເປັນຊາວໄຮ່ນາ ບໍ່ມີພື້ນນາຢ່າງພຽງພໍ ສຳລັບທຸກຄອບຄົວຊາວບ້ານ ແຕ່ລະປີມີແຕ່ພາກັນຖາງປ່າເຮັດໄຮ່ປູກເຂົ້າ ເຊິ່ງປະຊາຊົນເຫັນວ່າເປັນອາຊີບທີ່ລຳບາກກາກກຳຫລາຍ, ບັນດາເຈົ້າກົກເຈົ້າເຫລົ່າຂອງບ້ານຈຶ່ງໄດ້ວິ່ງເຕັ້ນຊອກຫາບ່ອນທີ່ທຳມາຫາກິນໃໝ່ທີ່ສາມາດສັບຊາວເປັນທົ່ງນາໄດ້ ເລີຍມາເຫັນເຂດເມືອງກາສີເຊິ່ງ ເວລານັ້ນກໍຂຶ້ນກັບແຂວງຫລວງພະບາງຄືກັນ; ເມືອງກາສີມີພື້ນທີ່ກວ້າງຂວາງ ແລະອຸດົມສົມບູນ ເໝາະສົມກັບການສັບຊາວເປັນທົ່ງນາໄດ້. ໃນທ້ອງເດືອນພຶດສະພາ 1960, ຄອບຄົວປະຊາຊົນສ່ວນໃຫຍ່ຂອງບ້ານລັ້ງເປົ້າໄດ້ອົບພະຍົບມາຢູ່ເມືອງກາສີ, ສ່ວນພວກທີ່ເຫລືອກໍຍ້າຍໄປຢູ່ບ້ານສົບຄາວ ເຮັດໃຫ້ນາຍຄູຄຳຄ່ອງຕ້ອງຍ້າຍບ່ອນປະຈຳການໄປຢູ່ບ້ານອື່ນຕາມການສັບຊ້ອນຂອງພະແນກສຶກສາແຂວງຫລວງພະບາງໃນເວລານັ້ນ. ເຂດທີ່ທ່ານໄປປະຈຳການໃໝ່ນັ້ນ (ເຂດເມືອງຮົ່ງມ) ເປັນເຂດ "ຍາດແຍ່ງ" ລະຫວ່າງກຳລັງຂອງຝ່າຍແນວລາວຮັກຊາດແລະ

ກຳລັງຂອງພວກຫຸ່ນວຽງຈັນ (ພວກວັງປາວ) ແລະຕໍ່ມາເຂດນັ້ນກໍໄດ້ຮັບການປົດປ່ອຍໂດຍກອງກຳລັງຝ່າຍແນວລາວຮັກຊາດຢ່າງສົມບູນ. ທ່ານນາຍຄູຄຳຄ່ອງ ຈຶ່ງໄດ້ເຂົ້າຮ່ວມຖັນແຖວປະຕິວັດ ໂດຍທີ່ການຈັດຕັ້ງກໍໄດ້ມອບໝາຍໃຫ້ທ່ານຮັບໜ້າທີ່ຫລາຍຕຳແໜ່ງສຳຄັນໃນວົງການສຶກສາຂອງເຂດປົດປ່ອຍ ໃນທ່າມກາງສົງຄາມປະຕິວັດອັນດຸເດືອດຊູ້ງວຊາດ. ໃນສະພາວະການແຫ່ງສົງຄາມປະຕິວັດດັ່ງກ່າວ ທ່ານເອງກໍໄດ້ສຸມທຸກກຳລັງເຫື່ອແຮງແລະສະຕິປັນຍາໃສ່ວຽກງານຕາມການມອບໝາຍຂອງການຈັດຕັ້ງ ແລະມີຜົນສຳເລັດຫລາຍປະການທີ່ໜ້າຍ້ອງຍໍຊົມເຊີຍ. ແຕ່ໃນທ່າມກາງແປວໄຟແຫ່ງສົງຄາມນັ້ນ ນາຍຄູຄຳຄ່ອງ ພ້ອມດ້ວຍຄອບຄົວໄດ້ຕົກເຂົ້າສູ່ວົງປິດລ້ອມຂອງກຳລັງສັດຕູ ແລະຖືກກວາດຕ້ອນມາຢູ່ເຂດຄວບຄຸມຂອງຝ່າຍວຽງຈັນ ເພິ່ນຈຶ່ງກັບມາຢູ່ບ້ານເກີດເມືອງນອນຂອງເພິ່ນ ຄື ບ້ານໂພນງາມ ເມືອງໂພນໂຮງ ຈົນເຖິງເວລາປະເທດຊາດໄດ້ຮັບການປົດປ່ອຍ ເພິ່ນຈຶ່ງໄດ້ສືບຕໍ່ເຂົ້າຮ່ວມຖັນແຖວປະຕິວັດ ໃນພາລະກິດປົກປັກຮັກສາ ແລະສ້າງສາປະເທດຊາດໃນຫລາຍໆຕຳແໜ່ງຈົນເຖິງວາລະອອກຮັບເບ້ຍບຳນານ.

ສະນັ້ນ ຈຶ່ງຖືວ່າ ທ່ານຄູຄຳຄ່ອງ ເລື່ອນວິໄລວົງ ເປັນຜູ້ມີຜົນງານອັນໃຫຍ່ຫລວງໃນພາລະກິດຂະຫຍາຍການສຶກສາໃນຫລາຍຍຸກຫລາຍສະໄໝ ໃນນັ້ນທີ່ສຳຄັນ ແມ່ນເພິ່ນໄດ້ປະກອບ

ສ່ວນໃນພາລະກິດປະຕິວັດຊາດປະຊາທິປະໄຕ ແລະໃນໄລຍະປົກປັກຮັກສາພັດທະນາປະເທດຊາດຢ່າງຫ້າວຫັນ. ຜ່ານຊີວິດບັ້ນຕ່າງໆຂອງເພິ່ນ ເຫັນວ່າມີທັງໄລຍະແຫ່ງຄວາມມ່ວນຊື່ນ ຄວາມສຸກສົມຫວັງ ແຕ່ກໍມີທັງໄລຍະທີ່ຂ້ຽວຂາດຈົນເກືອບເອົາຊີວິດບໍ່ລອດ. ແຕ່ບໍ່ວ່າຈະຕົກຢູ່ໃນສະຖານະການໃດ ເພິ່ນກໍທຸ່ນທ່ຽງເປັນເຈົ້າການ ແລະມີໄຫວພິບຄ່ອງແຄ້ວ ຈຶ່ງສາມາດຜ່ານພົ້ນແຕ່ລະໄລຍະມາໄດ້ຢ່າງຕະຫລອດປອດໄພ, ເບິ່ງແລ້ວຊີວິດຂອງເພິ່ນນັບເປັນຕົວຢ່າງທີ່ດີສຳລັບຄົນຮຸ່ນໃໝ່ໃຫຍ່ລຸນຂອງພວກເຮົາທີ່ສຸດ.

ດັ່ງນັ້ນ ໃນຖານະລູກສິດຊຸດທຳອິດຂອງ ທ່ານຄູຄຳຄ່ອງ ເລື່ອນວິໄລວົງ ຂ້າພະເຈົ້າຈຶ່ງຂໍຍ້ອງຍໍຊົມເຊີຍຜົນງານໃນຕະຫລອດອາຍຸລັດຖະການຂອງເພິ່ນທີ່ສະແດງອອກໃນຜົນງານການຂຽນຂອງເພິ່ນຊຸດນີ້, ຂໍຮ່ຳຮຽນເອົາແບບຢ່າງຊີວິດຂອງເພິ່ນແລະຂໍອວຍພອນໃຫ້ເພິ່ນຈົ່ງມີອາຍຸໝັ້ນຂວັນຍືນສືບຕໍ່ເປັນຮົ່ມໂພຮົ່ມໄຊໃຫ້ແກ່ອະນຸຊົນຄົນຮຸ່ນລູກຫລານສືບຕໍ່ໄປ.

ມະຫາວິທະຍາໄລ ແຫ່ງຊາດ ເດືອນ ເມສາ 2012
ຣສ.ລຳໄມ ພິພັກຂະວົງ

## ຕອນ 1: ນັກຮຽນຄູຫຼວງພະບາງ

ໃນຕົ້ນລະດູໜາວ ທ້າຍເດືອນທັນວາ ປີ 1957, ຍົນ "ດັກໂກຕາ" ລຳນຶ່ງແລ່ນອອກຈາກລານບິນເດີ່ນຍົນວັດໄຕ ພຸ່ງຕົວຂຶ້ນສູ່ທ້ອງຟ້າມຸ່ງໜ້າເມືອທາງທິດເໜືອ. ໃນຈຳນວນຄົນໂດຍສານຂອງຍົນລຳດັ່ງກ່າວກໍມີນັກຮຽນຄູສາມສິບກວ່າຄົນ, ໃນນັ້ນກໍມີຂ້ອຍຜູ້ນຶ່ງ. ນັບເປັນເທື່ອທຳອິດທີ່ຂ້ອຍໄດ້ໂດຍສານ ດ້ວຍທາງເຮືອບິນ. ຈາກຈຸດສູງ ເຮົາສາມາດແນມເຫັນທັດສະນີຍະພາບອັນສວຍສົດງົດງາມຂອງທົ່ງພຽງວຽງຈັນ ຂ້ອຍເບິ່ງລົງໄປກໍແນມເຫັນໄດ້ທັງທົ່ງນາ ຊຶ່ງບາງບ່ອນກຳລັງສຸກເຫຼືອງອຸ່ມທຸ່ມ, ບາງບ່ອນກໍກຳລັງເກັບກ່ຽວມັ້ງມັດ ເປັນກອງຈຸ່ມກຸ່ມຈີ່ມກີ່ມ. ສ່ວນເສັ້ນທາງເລກທີ 13 ກໍຍັງແດງຈີ່ງຄີ່ງ ຄົດໆລ້ຽວໆໂງ່ງໂງ ແງະ ເປັນແລວຂຶ້ນເມືອທາງເໜືອ. ເວົ້າເຖິງເສັ້ນທາງໃນສະໄໝນັ້ນບໍ່ທັນໄດ້ປູຢາງຄືສະໄໝນີ້ດອກ ມີແຕ່ພວກຄູລີເອົາຫີນພູຫີນຜາມາທັບທໍ່ໜ່ວຍໄຂ່ເປັດໄຂ່ໄກ່ມາລຽນຢາຍຕາມທາງ ແລ້ວເອົາຕີນຊ້າງມາຕຳ, ສອງຂອກທາງມີຝຸ່ນມີເຟືອຍຫຸ້ມທໍ່ຢ່າງຫຼວງຫຼາຍ. ນອກຈາກນັ້ນ ເຮົາຍັງສາມາດແນມເຫັນຊັບພະຍາກອນ ອັນມີຄຸນຄ່າຂອງຊາດເຊັ່ນ ພູຜາປ່າດົງອັນຕຶບໜາຂຽວອຸ່ມທຸ່ມ ຕົ້ນໄມ້ໃຫຍ່ກໍຍັງມີຫລວງຫຼາຍ ເພາະໃນສະໄໝນັ້ນບໍ່ທັນມີຄົນຕັດຕົ້ນໄມ້ທຳລາຍປ່າເທື່ອ. ຈອມພູແຫຼມໃຫຍ່ອັນສະລັບສັບຊ້ອນແລະ

ປົກຄຸມໄປດ້ວຍປ່າໄມ້ອັນສົດສວຍຂຽວອຸ່ມທຸ່ມ ເກາະກ່າຍກັນໄປຈົນສຸດສາຍຕາ. ຜາບາງບ່ອນກໍແດງຈືງກືງດ້ວຍຫີນອັນຊໍ່ຊ້ອງແລະດ່າງດາວ ພູບາງໜ່ວຍກໍແລດແດງເປັນສາຍລົງແຕ່ຈອມໄປເຖິງລຸ່ມ ເນື່ອງຈາກມີການເຊາະເຈື່ອນຂອງນ້ຳໃນລະດູຝົນ. ຕາມຮ່ອມຫ້ວຍຫວ່າງພູ ບາງບ່ອນກໍຈະເຫັນເຝືອຂາວຢາຍເດຍລະດາດ ຍິ່ງເພີ່ມຄວາມງາມໃຫ້ແກ່ທັດສະນີຍະພາບທຳມະຊາດຂຶ້ນອີກ. ໂອ້ ! ເມືອງ ລາວເຮົາເອີຍ ເຈົ້າຊ່າງສວຍງາມແທ້ເດ! ທຳມະຊາດພາຍໃຕ້ທ້ອງຟ້າສີຄາມ ເຈົ້າຊ່າງງາມເໝືອນສະຫວັນເສກສັນປັ້ນແຕ່ງແທ້ນໍ !

ສາມສິບຫ້ານາທີຜ່ານໄປ ຍົນຍັງສືບຕໍ່ແຫກອາກາດ ຕັດເຝືອໂງ່ນນັ້ນຫາໂງ່ນນີ້ ຜ່ານກ້ອນເຝືອຫຼາຍຕໍ່ຫຼາຍກ້ອນ ບາງຄັ້ງຍົນກໍຫອບຕົວຂຶ້ນ ບາງຄັ້ງກໍໂຍນຕົວລົງ ເຮັດໃຫ້ຄົນໃນຍົນຕ້ອງຫາຍໃຈບໍ່ທົ່ວທ້ອງ. ສະເພາະຂ້ອຍກໍຍິ່ງມີຄວາມຕື່ນເຕັ້ນ ເພາະເປັນຄັ້ງທຳອິດທີ່ໄດ້ຂີ່ຍົນ. ຂະນະທີ່ຂ້ອຍກຳລັງລະເມີເພີ້ຝັນຊົມວິວທິວທັດອັນສວຍສົດງົດງາມຢູ່ນັ້ນ ກໍມີສຽງນຶ່ງດັ່ງຂຶ້ນ“ອ້າຍໆ!” ຂ້ອຍຕື່ນຍຸບບາດນຶ່ງ ຫຼຽວມາເບິ່ງກໍເຫັນນາງສາວ “ໂອແຕສ” (ນາງສາວເສີບອາຫານນຳຍົນ) ຄົນນຶ່ງໃນຊຸດສີຟ້າ ຍື່ນພາຖາດເຂົ້າໜົມມາໃຫ້ຂ້ອຍ, ຂ້ອຍຢິບເອົາເຂົ້າໜົມສອງສາມກ້ອນມາອົມພ້ອມທັງກ່າວຂອບໃຈ ນາງສາວຄົນນັ້ນກໍຍິ້ມຕອບ ແລ້ວກໍຍື່ນພາຖາດໃຫ້ຜູ້ໃໝ່ຕໍ່ໆໄປ. ນາງໄດ້ແຈກຢາຍເຂົ້າໜົມຈົນທົ່ວເຖິງ ແລ້ວກໍຍ່າງໄປຫາບ່ອນພັກເຊົາ, ສາຍຕາຂອງອ້າຍບ່າວນັກຮຽນຄູກໍແນມນຳສາວເສີບອາຫານຄົນນັ້ນ ຈົນຫຼົບເຂົ້າຫ້ອງພັກຂອງລາວ. ນີ້ແຫຼະນາງສາວລາວຂອງເຮົາຈັ່ງແມ່ນງາມ ຍັງມີອີກຫຼາຍຮ້ອຍຫຼາຍພັນຄົນທີ່ງາມ ທຽບເທົ່າກັບດາລາຂອງຕ່າງປະເທດ.

ຫ້າສິບຫ້ານາທີຜ່ານໄປ ຂ້ອຍແນມລົງສູ່ພື້ນດິນກໍເຫັນທໍ່ຄຳເຈົ້າຊີວິດ ແລະທາດພູສີເຫຼືອງອຸ່ຍຫຸ່ຍ. ນັ້ນແຫຼະ ເມືອງຫຼວງ

ພະບາງ! ຍິນຄ່ອຍໆປັກຫົວລົງ ເຈີດເວີ່ນຫາໂອກາດອັນເໝາະ ສົມ ແລ້ວລົງສູ່ພື້ນດິນດ້ວຍຄວາມປອດໄພ. ນີ້ໜໍຫຼວງພະບາງ ເປັນຄັ້ງທຳອິດທີ່ຂ້ອຍມາເຫັນ! ປະຕູຍົນເປີດອອກ ຂ້ອຍກ້າວຂາ ລົງສູ່ພື້ນດິນ ທັນໃດກໍໄດ້ຍິນສຽງຮ້ອງທັກທາຍຈາກໃຜຜູ້ນຶ່ງ:

- ຈັ່ງໃດ ຄຳຄ່ອງ? ພວກເຮົາມາຕ້ອນຮັບໂຕໄດ໋ນີ້!"

ຂ້ອຍງວາກໄປຫາສຽງທີ່ຮ້ອງມາກໍເຫັນ ໝໍຄຳເພາະ ແກ້ວມະຫາ ວົງ ຊຶ່ງເປັນນຶ່ງໃນຈຳນວນນັກຮຽນເກົ້າຄົນ ທີ່ມານຳຍົນ"ບີເວີ" ກ່ອນພວກຂ້ອຍມື້ວານນີ້.

- ເອີ ! ພໍດີມາເອົາເຄື່ອງຊ່ວຍເຮົາແດ່! " ຂ້ອຍເວົ້າ.

ລົດບັດຄັນນຶ່ງບັນຈຸພວກຂ້ອຍສາມສິບເກົ້າຄົນເຂົ້າສູ່ ໝວດໂຮງຮຽນຫຼວງພະບາງ. ຍາອ້າຍສົມລົດ ເພິ່ນເປັນຄົນວຽງ ຈັນ ເປັນຄູສອນຂຶ້ນເມືອຢູ່ຫຼວງພະບາງໄດ້ສິບປີກວ່າແລ້ວ ເປັນ ພະນັກງານຢູ່ຫ້ອງການສຶກສາແຂວງຫຼວງພະບາງ ເພິ່ນມາຮັບ ຕ້ອນ ແລະແຈກຢາຍພວກຂ້ອຍໄປພັກຢູ່ແຕ່ລະຫ້ອງຂອງທີ່ພັກ. ສະເພາະ ໝໍສີ, ໝໍຫຍຸຍ ແລະໝໍບຸນຍັງທີ່ໄດ້ສ້າງຄອບຄົວແລ້ວ ເອົາເມຍຂຶ້ນເມືອພ້ອມນັ້ນ ເພິ່ນຈັດໄວ້ຫ້ອງນຶ່ງຕ່າງຫາກ. ສ່ວນ ພວກຂ້ອຍ 36 ຄົນ ເພິ່ນໄດ້ຈັດເປັນສາມຫ້ອງນອນ.



ຮູບແຕ້ມຈາກຮູບຖ່າຍ
ນາຍຄູຄຳຄ່ອງ ໃນປີ 1952

ເຈົ້າສີສຸວັນ ທອງສາຄອນ ຜູ້ກວດກາປະຖົມສຶກສາແຂວງຫຼວງພະບາງໄດ້ເຕົ້າໂຮມພວກຂ້ອຍແລະໄດ້ລຸລ່ວງວ່າ

- ດີແລ້ວ! ທີ່ພວກທ່ານມາເຖິງຫຼວງພະບາງດ້ວຍຄວາມປອດໄພ, ຢູ່ຫຼວງພະບາງພີ້ຈະມີນັກຮຽນ 30 ກວ່າຄົນທີ່ຈະເຂົ້າຮຽນພ້ອມພວກທ່ານ. ບ່ອນພັກເຊົາຂອງພວກທ່ານ ແມ່ນຢູ່ທີ່ນີ້ຊົ່ວຄາວກ່ອນ. ບ່ອນກິນເຂົ້າແມ່ນມີຄົນຮັບລ້ຽງຢູ່ຕໍ່ໜ້າໂຮງຮຽນຟາກທາງຢາງຮິມນ້ຳຄານນີ້ເອງບໍ່ໄກດອກ, ຄ່າອາຫານເດືອນນຶ່ງ 450ກີບຕໍ່ຄົນ ກິນມື້ນຶ່ງສາມຄາບ ແມ່ນເງິນເດືອນຂອງພວກທ່ານນັ້ນແລ້ວ ຈ່າຍເອົາເອງ. ບໍ່ກາຍສອງສາມວັນແມ່ນກຽມຂຶ້ນຫ້ອງໂລດບ່ອນຮຽນແມ່ນຢູ່ໝວດໂຮງຮຽນສີຖານທາງໃຕ້ຂອງເມືອງພຸ້ນແຕ່ພວກທ່ານຈະຕ້ອງໄດ້ຍ່າງວັນລະສີ່ຖ້ຽວ".

ທີ່ໂຮງຮຽນອົບຮົມຄູຫຼວງພະບາງ ນັກຮຽນເຈັດສິບກວ່າຄົນກຳລັງສຸມຈິດສຸມໃຈຮັບຟັງການສິດສອນຂອງຍາພໍ່ເພັຍອ້ວນປຣາສິດ. ເພິ່ນເປັນຄູອາວຸໂສ ທັງເປັນອຳນວຍການໂຮງຮຽນແລະສິດສອນໄປພ້ອມ; ທຸກວັນທີ່ຂຶ້ນສິດສອນເພິ່ນໄດ້ສຸມທຸກເຫື່ອແຮງສະຕິປັນຍາສິດສອນວິຊາຄູໃຫ້ພວກຂ້ອຍຢ່າງໝົດຈິດໝົດໃຈ; ເພິ່ນມີຄວາມເປັນຫ່ວງເປັນໃຍຫຼາຍ ຢ້ານພວກຂ້ອຍກຳບົດຮຽນບໍ່ໄດ້. ຖ້າບໍ່ເຂົ້າໃຈບົດໃດແລ້ວຈະບໍ່ມີທີ່ປຶກສາຫາລືເພາະຄູຊຸດນີ້ຈະໄດ້ສົ່ງອອກໄປສອນຢູ່ຊົນນະບົດທາງໄກສອກຫຼີກ, ບົດຮຽນນັບແຕ່ນ້ອຍຫາໃຫຍ່ ແຕ່ງ່າຍດາຍຫຼືຫຍຸ້ງຍາກສັບສົນ ກໍລວນແຕ່ອອກແບບເປັນຮ່າງກາຍໃສ່ກະດານໃຫ້ໝົດເຊັ່ນ: ປຶ້ມບົດສອນປະຈຳວັນ (Journal de note) ລາຍງານປະຈຳເດືອນ, ບັນຊີເອົາເດັກຂຶ້ນຫ້ອງ ແລະຄ້າງຫ້ອງ, ປຶ້ມຂາເຂົ້າຂາອອກແລະອື່ນໆ...

ພວກຂ້ອຍໄດ້ຮຽນທິດສະດີທັງລົງພາກປະຕິບັດໄປພ້ອມໂດຍໃນແຕ່ລະວັນກໍຜັດປ່ຽນກັນຂຶ້ນຫ້ອງສິດສອນ. ການຮຽນສອນແມ່ນແບບສາມຫ້ອງຄວບ, ຄູຄົນດຽວຈະຕ້ອງສອນນັກຮຽນ

ສາມຊັ້ນ: ປ.1 ປ.2 ປ.3 ລວມຢູ່ຫ້ອງດຽວ. ຜູ້ໃດບໍ່ໄດ້ທຳການສິດສອນໃນວັນນັ້ນກໍຕິດຕາມສິ້ງຊອມເອົາຈຸດອ່ອນ ແລະຂໍ້ບົກພ່ອງຂອງຜູ້ສອນເພື່ອຈະໄດ້ຕຳນິຕິຊົມກັນ ໃນຊົ່ວໂມງສຸດທ້າຍ. ສຳຫຼັບຂ້ອຍໃນການສິດສອນນັກຮຽນຄວບສາມຫ້ອງໃນວັນນັ້ນຖືວ່າບໍ່ມີຄວາມຫຍຸ້ງຍາກ. ເພື່ອນນັກຮຽນຄູເຈັດສິບກວ່າຄົນໃຜໆກໍຈັບປື້ມຂຽນເພື່ອສິ້ງຊອມເອົາຈຸດອ່ອນແລະຂໍ້ບົກພ່ອງຂອງຂ້ອຍ; ການເຝິກສອນ 45 ນາທີຜ່ານພົ້ນໄປ ຂ້ອຍໄດ້ມອບໃບປິວ (Fiche) ພ້ອມກັບປື້ມແຕ່ງບົດສອນໃຫ້ແກ່ຍາພໍ່ເພຍອ້ວນ ປຣາສິດ ເພື່ອກວດກາດັດແປງ ແລະແກ້ໄຂ, ສຽງຕົບມືໄຊໂຍຂອງໝູ່ເພື່ອນນັກຮຽນຄູດັງກ້ອງທົ່ວຫ້ອງ, ຍາພໍ່ເພຍອ້ວນປຣາສິດ ຍິ້ມເປີຍບາດນຶ່ງແລ້ວເວົ້າວ່າ

- "ນາຍຄູຄຳຄອງ ເລື່ອນວິໄລວົງ ສອນດີເປັນພິເສດ ຖ້າຜູ້ໃດຫາກສອນໄດ້ຄືນາຍຄູຄົນນີ້ຖືວ່າຢູ່ໃນລະດັບເກັ່ງຂໍໃຫ້ພວກທ່ານນັກຮຽນຕົບມືຊົມເຊີຍໃຫ້ແກ່ຄູຄຳຄອງອີກຄັ້ງນຶ່ງ ຊົມເຊີຍ!!".




ໝວດໂຮງຮຽນປະຖົມສຶກສາສີຖານໃນປັດຈຸບັນ ທີ່ເມືອງຫລວງພະບາງ

"ໂມນິເຕີ" ຄຳຕັນ ກໍເປັນອາຈານສອນພວກຂ້ອຍຄົນນຶ່ງ ທີ່ຮັບຜິດຊອບສອນວິຊາສິລະປະຮ້ອງເພັງ ແລະກິລາ ກາຍະກຳ ເພິ່ນຜູ້ນີ້ທັງສອນຮ້ອງເພງ ແລະຟ້ອນໃຫ້ເບິ່ງພ້ອມ ມີບາງເພງ ເພິ່ນກໍເອົານັກຮຽນຄູຍິງອອກໄປຫັດຟ້ອນໃຫ້ເບິ່ງ ຜູ້ທີ່ເພິ່ນຟ້ອນ ເປັນສິລະປະຂອງໂຮງຮຽນມາແຕ່ກ່ອນ ກໍເອົາແທ້ເອົາວ່າ ໄຊ ລວດລາຍໃຫ້ອ້າຍບ່າວຢຽງຈັບເບິ່ງ. ວັນນັ້ນບັນຍາກາດດີເປັນພິ ເສດ ສຽງເພງ "ນົກເຂົາຂັນ" ດັງແວ່ວຂຶ້ນທົ່ວຫ້ອງຮຽນ ມັນເປັນ ສັນຍະລັກບົ່ງບອກເຖິງຄວາມຊົງຈຳຂອງຂ້ອຍຢ່າງບໍ່ມີວັນຈະຫຼົງ ລືມໄດ້.

- "ໂອ! ເຈົ້ານົກເຂົາຂັນ ຂັນແລ້ວເຈົ້າກໍບິນສູ່ຮັງໄດ້ຍິນແຕ່ສຽງ ໄດ້ຍິນແຕ່ສຽງດັງແຈ້ວໆດັງແວ່ວມາ..." (ຮ້ອງ 3 ເທື່ອຖືວ່າສຸດ ເພັງ).

ແລງວັນນັ້ນກໍເໝືອນກັບແລງວັນອື່ນໆທີ່ຜ່ານມາ ນັກ ຮຽນຄູທັງຍິງຊາຍເຈັດສິບສາມຄົນ ນຸ່ງຊຸດສີຂາວສັ້ນເຕົ້າໂຮມ ກັນຢູ່ເດີ່ນກິລາທາດຫຼວງ, ບາງຄົນກຳລັງແລ່ນຊ້ຳເທົ້າຢູ່ກັບທີ່ ບາງຄົນກຳລັງຫັດກາຍແບບທຳມະດາຢືດເສັ້ນຢືດເອັນ ສຽງໂອ້ ລົມກັນເລື່ອງຕ່າງໆນາໆ ສຽງເວົ້າເຍາະເຍີ້ຍສຽດສີແບບບ່າວ ສາວ ລະຫວ່າງນັກຮຽນຄູຊາຍ ແລະຍິງ. ທັນໃດນັ້ນສຽງໝາກ ຫວີດຂອງ "ໂມນິເຕີ" ຄຳຕັນ ດັງຂຶ້ນຕິດໆ!ຕິດໆ! ຕິດໆ! ສຽງ ວິນແຊວງຽບລົງຜູ້ທີ່ນັ່ງຢູ່ກໍ່ຜູດລຸກຂຶ້ນ "ໂມນິເຕີ" ຄຳຕັນກໍແລ່ນ ອອກໜ້າ ຈາກນັ້ນແມ່ນພວກຂ້ອຍແລ່ນນຳຫຼັງເພິ່ນໄປ ຫັກພຸ່ນ ທິບພີ້ ແລ່ນອ້ອມເປັນວົງມົນ ແລ້ວຜ່ອນຄວາມໄວລົງຕາມລຳ ດັບຈົນເຖິງຂັ້ນຍ່າງຊ້າແລ້ວຢຸດ, ສູບລົມເຂົ້າປອດຖອດລົມອອກ ພ້ອມກັບກົ້ມຫົວລົງ ເອົາສອງປາຍມືລົງຈຸໃສ່ສອງປາຍຕີນ ເງີຍ ຂຶ້ນແລ້ວວາແຂນອອກຊື່ໆ ເຮັດແບບເກົ່າຫຼາຍໆເທື່ອແລ້ວຈຶ່ງ ແຕກແຖວກັນອອກແລ້ວໂຮມກັນເປັນກ້ອນ. ຈາກນັ້ນ "ໂມນິເຕີ" ໄດ້ແລ່ນອອກໄປຢືນປິ່ນຫຼັງໃສ່ພວກຂ້ອຍຫ່າງໄກປະມານ 10

ແມັດ ສຽງໝາກຫວີດດັງຂຶ້ນພ້ອມກັບຍົກມືກຳຊ້າຍຂຶ້ນກາຍຫົວ ແລ້ວຊີ້ນີ້ຂຶ້ນເປັນ 3 ດື່ວ; ພວກຂ້ອຍກໍຢືນລຽນເປັນ 3ແຖວ ຍາວຢຽດໄປທາງຫຼັງ, ທັນໃດນັ້ນເພິ່ນກໍຫັນຕົວປິ່ນໜ້າມາຫາພວກຂ້ອຍ ແລ້ວຮ້ອງເປັນຄຳສັ່ງວ່າ:"ແຖວຈັດ, ລຽບ! ຂວາຫັນ, ຊ້າຍຫັນ ຂວາເປັນຫຼັກວາແຂນອອກ!" "ປະຕິບັດ" ເຫັນວ່າຮຽບຮ້ອຍແລ້ວ ກໍສັ່ງຕໍ່ "ລຽບ".

- "ແຖວໜ້າ!ກ້າວໜ້າສອງກ້າວ! ກ້າວ..ກ້າວ!"
- "ແຖວຫຼັງ!ກ້າວຫຼັງສອງກ້າວ! ກ້າວ!"
- "ແຖວກາງ ຫຍັບໄປທັງຊ້າຍ 1 ບາດກ້າວ! ກ້າວ! ກ້າວ!"

ຈາກນັ້ນອາຈານຄຳຕັນ ກໍໄດ້ເຮັດເປັນແບບຢ່າງໃຫ້ເບິ່ງແຕ່ລະທ່າຂອງການທັດກາຍະບໍລິຫານ ແລ້ວຈຶ່ງສັ່ງໃຫ້ພວກຂ້ອຍປະຕິບັດໄປຕາມສຽງໝາກຫວີດ ເຮັດຫຼາຍເທື່ອຕໍ່ຫຼາຍທີກໍລຶ້ງເຄີຍ ແລະຈຶ່ໄດ້ບົດຮຽນທັດກາຍ ແລະເຮັດໄດ້ຢ່າງລຽນໄຫຼ.

ທີ່ຫໍພັກໝວດໂຮງຮຽນຫຼວງພະບາງຄືນນຶ່ງປະມານ 11 ໂມງກາງຄືນ ໝໍໄຊຊະທິ ສີຫາລາດ ແລ່ນອີ່ເລີເປີເສີເຂົ້າມາຢ່າງໜ້າມ້ານຈິດຫາຍໃຈສິຫູສິຕາ ພ້ອມທັງເອີ້ນຢ່າງໜ້າຕື່ນຕົກໃຈວ່າ

- ລຸກເດີ! ລຸກມາເດີ ລຸກມານີ້ແໝສູ!", ຊິວບຶດຽວໝູ່ຄູ່ຫົວຫໍພັກກໍລຸກມາຫຸ້ມສໍ້ຖາມວ່າ:
- ແມ່ນຫຍັງ?"
- ເລື່ອງຫຍັງເກາະຮື?"
- ກູເກືອບຕາຍ!"
- ໂຕໄປເຮັດຫຍັງມາຊັ້ນ?"
- ສິມີຫຍັງ! ເຮົາກັບໝູ່ຜູ້ນຶ່ງ ໄປຫຼິ້ນກັບນາງສົມດີ ແລະນາງບັງອອນ ຢູ່ຄຸ້ມລະແມດ ບໍ່ນານພໍເທົ່າໃດ ກໍມີພວກອັນຕະພານສອງຄົນຊ້ອນລົດຈັກກັນມາຈອດຢູ່ໜ້າບ້ານນາງບັງອອນແລ້ວຮ້ອງໃສ່ເຮົາແບບທ້າທາຍວ່າ:

- ເຮີຍ! ແມ່ນໃຜຢູ່ເທິງຫັ້ນ? ລົງມານີ້ເບິ່ງດູ? ມາທົດສອບກັນເບິ່ງໃຜສິເກັ່ງກວ່າໃຜ!"

- ແລ້ວໂຕຕອບມັນວ່າແນວໃດ?"

- ເຮົາບໍ່ຕອບ! ມີແຕ່ບັງອອນຍ່າງອອກມາຢືນຢູ່ຕໍ່ໜ້າຂັ້ນໄດແລ້ວເວົ້າກັບພວກເຂົາວ່າ:

- ພວກອ້າຍຢ່າເວົ້າແນວນັ້ນ ລາວບໍ່ໄດ້ເກາະຜິດພວກເຈົ້າ ແລ້ວພວກເຈົ້າມາເກາະຜິດລາວເຮັດຫຍັງ? ອັນນີ້ແມ່ນໝູ່ຂອງຂ້ອຍຮຽນນຳກັນທຸກມື້ ລາວມາຫຼິ້ນນຳຂ້ອຍ ຂໍນຳອ້າຍຫຼາຍໆເຖາະ!", ບັງອອນເວົ້າຍັງບໍ່ທັນສຸດຄວາມ ບັກນຶ່ງກໍດອດອອກມາວ່າ

- ບັງອອນເຈົ້າບໍ່ຕ້ອງມາສູ້ຕາງມັນ ຂ້ອຍຮູ້ພໍແຮງເລື່ອງເຈົ້າກັບບັກອັນນີ້ນາ! ບອກມັນມາຫາຂ້ອຍດຽວນີ້ ຂ້ອຍຢາກທົດສອບສີມືກັບອ້າຍບ່າວວຽງຈັນຈັກຄັ້ງ! ບອກມັນລົງມາ!, ບັງອອນເຫັນທ່າບໍ່ດີຈຶ່ງດຶງເອົາແຂນເຮົາເຂົ້າໄປເຊື່ອງໄວ້ໃນເຮືອນ ແລ້ວບອກວ່າ:

- ອ້າຍບໍ່ຕ້ອງປາກເດີ້! ນ້ອງຊິເວົ້າກັບເຂົາເອງ ພວກນີ້ແມ່ນພວກນັກເລງໄດ໋!"

- ແລ້ວໂຕເຮັດແນວໃດຈຶ່ງມາໄດ້?

- ພວກເຂົາເມື່ອຍຖ້າແລ້ວກໍເລີຍໜີ, ດຽວນີ້ຍັງມີໝູ່ເຮົາຜູ້ນຶ່ງຢູ່ເຮືອນນາງສົມດີ"

- "ຕົກລົງ!", ພວກເຮົາເປັນສຽງດຽວ

- "ຕ້ອງໄປຕ້ອນເອົາໝໍ່ສະໝອນ ແຕ່ການໄປທຸກຄົນຕ້ອງມີສະຕິລະວັງຕົວ ແລະ ໄປຫຼາຍໆຄົນນຳກັນ! ໄປ!."

ຂ່າວດັ່ງກ່າວໄດ້ຊ່າລືໄປທົ່ວໂຮງຮຽນ ຮອດຫູທ່ານຜູ້ກວດກາປະຖົມສຶກສາປະຈຳແຂວງ ແລະທ່ານກອມມີແຊ (ກອງບັນຊາການຕຳຫຼວດແຂວງ) ສອງສາມມື້ຕໍ່ມາ ຍາພໍ່ເພຍອ້ວນປຣາສິດໄດ້ຖາມນາງບັງອອນ ນາງກໍໄດ້ລຸກຂຶ້ນຕອບແບບສຸພາບວ່າ:

- ບໍ່ແມ່ນຂ້ານ້ອຍຟ້ອນພວກວຽງຈັນ! ຄືນນັ້ນ...”
ຈາກນັ້ນມາ ແຕ່ລະຄືນທຸກເສັ້ນທາງໃນນະຄອນຫຼວງພະບາງ ມີແຕ່ຕຳຫຼວດຍາມເປັນຈຸດພົບພວກໄວໜຸ່ມໄປເດີກມາດື່ນ ກໍບອກໃຫ້ໄປນອນ. ເຫດການດົນພໍສົມຄວນຈຶ່ງສະຫງົບ.

ບຸນກຸດສົງການ ພ.ສ 2500 ກໍຫຍັບນໍ່ເຂົ້າມາທຸກວັນ ນັກຮຽນຄູທັງຍິງຊາຍ ໃຜໆກໍຕັ້ງຄວາມຫວັງ ແລະຄອງຄອຍໃຫ້ວັນເວລາດັ່ງກ່າວຫຍັບເຂົ້າມາໄວໆ ໂດຍສະເພາະຜູ້ເພິ່ນມີຄູ່ມີຊູ້ຈະໄດ້ຄືບຊູ້ຄືບແຟນ ຈະໄດ້ພາກັນທິດນ້ຳຕີບພະຊາຍແລະເຂົ້າຖ້ຳ.

ວັນນຶ່ງ ຍາພໍ່ເພຍອ້ວນໄດ້ເວົ້າວ່າ:
- ບຸນປີໃໝ່ລາວພ.ສ 2500 ກໍໃກ້ຈະເຖິງແລ້ວ ນັກຮຽນຍິງຂອງພວກເຮົາມີໃຜແດ່ໃນຊຸມປີຜ່ານມາ ໄດ້ເຄີຍຟ້ອນນາງແກ້ວ ຟ້ອນນາງມະໂນລາ?”. ເພິ່ນຍັງເວົ້າຕໍ່ໄປອີກວ່າ: “ມື້ອື່ນເຊົ້າໃຫ້ພວກຄູຍິງໄປເລືອກເອົາກະໂຈມຫົວຢູ່ພະລາຊະວັງ ແລ້ວມາເຝິກຟ້ອນ ເມື່ອຮອດປີໃໝ່ຈະໄດ້ຟ້ອນຖວາຍພະບາດສົມເດັດພະເຈົ້າມະຫາຊີວິດສີສະຫວ່າງວົງ ພ້ອມດ້ວຍມະເຫສີ ແລະພະບໍລົມວົງສານຸວົງເພິ່ນຢູ່ພະລາຊະວັງ”.

ມື້ນັ້ນຊຶ່ງແມ່ນວັນເຝິກຟ້ອນຂອງຄູຍິງ ບັນຍາກາດດຳເນີນໄປດ້ວຍຄວາມຟົດຟື້ນມ່ວນຊື່ນ ແລະໜ້າເບິ່ງໜ້າຊົມທີ່ສຸດ. ບົດຟ້ອນນາງແກ້ວເຮັດໃຫ້ອ້າຍບ່າວວຽງຈັນ ເບິ່ງຊົມຢ່າງຕັ້ງອົກຕັ້ງໃຈ. ແຕ່ອະນິຈາ ນາງແພງ ພັດໝູບໜ້າໃສ່ໂຕະໄຫ້ສະອຶກສະອື້ນ ເຮັດໃຫ້ຍາພໍ່ເພຍອ້ວນ ຕົກຕະລຶງ ບາດແລ້ວຈຶ່ງຮູ້ວ່າກະໂຈມຫົວແຕ່ລະອັນບໍ່ຖືກກັບຫົວລາວ ບາງອັນກໍໃຫຍ່ໂພດ ບາງອັນກໍນ້ອຍໂພດ ຈຶ່ງບໍ່ໄດ້ຟ້ອນນຳໝູ່ ແລະບໍ່ມີໂອກາດທີ່ຈະໄດ້ໂຊລວດລາຍໃຫ້ອ້າຍບ່າວວຽງຈັນເບິ່ງ ໝູ່ຄູ່ນັກຮຽນຄູທັງໝົດໃຜໆກໍດູຕົນ ແລະເຫັນອົກເຫັນໃຈລາວ.

ເຈົ້ານາງວັນຄຳ ທີ່ເປັນຄົນຂາວແລະສວຍງາມແບບທຳ

# ຂໍໂທດຫຼາຍໆ



ປຶ້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ